ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: /ທຄຕລ ...................

ນະຄອນຫຼວງວຽງຈັນ, ວັນທີ: ............................

ຮຽນ: - ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
- ທ່ານຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
- ບັນດາທ່ານນັກລົງທຶນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ.

ເລື່ອງ: ຫົວໜ້າພະແນກກວດກາພາຍໃນ, ຫົວໜ້າພະແນກບັນຊີສັງລວມ ແລະ ຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ ຄົນໃໝ່.

- ອີງຕາມຂໍ້ຕົກລົງວ່າດ້ວຍການຊັບຊ້ອນພະນັກງານ, ເລກທີ 028/ທຄຕລ.2023, ລົງວັນທີ 02 ມິຖຸນາ 2023;
- ອີງຕາມຂໍ້ຕົກລົງວ່າດ້ວຍການຊັບຊ້ອນພະນັກງານ, ເລກທີ 033/ທຄຕລ.2023, ລົງວັນທີ 02 ມິຖຸນາ 2023;
- ອີງຕາມຂໍ້ຕົກລົງວ່າດ້ວຍການຊັບຊ້ອນພະນັກງານ, ເລກທີ 034/ທຄຕລ.2023, ລົງວັນທີ 02 ມິຖຸນາ 2023;
- ອີງຕາມລະບຽບການວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ມີຈຸດປະສົງຂໍແຈ້ງມາຍັງບັນດາທ່ານຊາບກ່ຽວກັບການປ່ຽນແປງ ຫົວໜ້າພະແນກກວດກາພາຍໃນ, ຫົວໜ້າພະແນກບັນຊີສັງລວມ ແລະ ຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ ຄົນໃໝ່ ຂອງ ທຄຕລ, ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ສັບຊ້ອນ **ທ່ານ ອົງສັກ ລັດຕະນະວົງ** ຫົວໜ້າສາຂາດົງໂດກ, ໃຫ້ເປັນ ຫົວໜ້າພະແນກກວດກາພາຍໃນ, ນັບແຕ່ວັນທີ 19 ມິຖຸນາ 2023 ເປັນຕົ້ນໄປ;
2. ສັບຊ້ອນ **ທ່ານ ນ. ສຸດຖະໜອມ ແກ້ວລະຄອນ** ຫົວໜ້າພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່ ໃຫ້ເປັນ ຫົວໜ້າພະແນກບັນຊີສັງລວມ, ນັບແຕ່ວັນທີ 19 ມິຖຸນາ 2023 ເປັນຕົ້ນໄປ;
3. ສັບຊ້ອນ **ທ່ານ ນ. ພູແສງທອງ ອານຸລັກຄຳ** ຫົວໜ້າພະແນກບັນຊີສັງລວມໃຫ້ເປັນ ຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ, ນັບແຕ່ວັນທີ 19 ມິຖຸນາ 2023 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫຼວງວຽງຈັນ

**ສາຍສະໝອນ ຈັນທະຈັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



# ຊີວະປະຫວັດຫຍໍ້ຂອງພະນັກງານ ທຄຕລ

## I. ສະພາບທົ່ວໄປ:

1. ຊື່ ແລະ ນາມສະກຸນ: **ທ່ານ ວົງສັກ ລັດຕະນະວົງ**
2. ວັນ, ເດືອນ, ປີເກີດ: 15/03/1970
3. ຊົນເຜົ່າ: ລາວ, ສາສະໜາ: ພຸດ.
4. ບ້ານເກີດ: ວັດຈັນທ່າ, ເມືອງ: ຈັນທະບູລີ, ແຂວງ: ນະຄອນຫຼວງວຽງຈັນ.
5. ບ່ອນທີ່ອາໄສຢູ່ປະຈຸບັນ: ບ້ານ: ວຽງສະຫວັນ, ເມືອງ: ສີໂຄດຕະບອງ, ແຂວງ: ນະຄອນຫຼວງວຽງຈັນ.
6. ສະຖານະພາບ: ແຕ່ງງານແລ້ວ
7. ຕໍາແໜ່ງ ແລະ ໜ້າທີ່ຮັບຜິດຊອບສາຍລັດ: ຫົວໜ້າ ທຄຕລ ສາຂາດົງໂດກ
8. ວັນ, ເດືອນ, ປີ ເຂົ້າສັງກັດລັດ: 12/02/1995
9. ວັນ, ເດືອນ, ປີ ເລື່ອນເປັນພະນັກງານສົມບູນ:
10. ວັນ, ເດືອນ, ປີ ເຂົ້າພັກສໍາຮອງ: 22/02/2002
11. ວັນ, ເດືອນ, ປີ ເຂົ້າພັກສົມບູນ: 19/03/2003
12. ລະດັບທິດສະດີການເມືອງ: ຊັ້ນຕົ້ນ
13. ລະດັບວັດທະນະທໍາ: ມໍ 6.

## II. ລະດັບການສຶກສາ:

1. ລະດັບການສຶກສາດ້ານວິຊາການສູງສຸດ: ປະລິນຍາໂທ, ຈົບປີ: 2011, ສາຂາວິຊາ: ເສດຖະສາດລະຫວ່າງປະເທດ, ຈົບຈາກ: ມະຫາວິທະຍາໄລແຫ່ງຊາດ
2. ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ພາສາຝຣັ່ງ: ລະດັບກາງ, ພາສາອັງກິດ, ລະດັບ: ພໍໃຊ້.

## III. ສະພາບການເຄື່ອນໄຫວອອງກາງານນັບແຕ່ມື້ເຂົ້າສັງກັດລັດ ຈົນເຖິງປັດຈຸບັນ:

- 1995-2001 ເປັນພະນັກງານວິຊາການ ທຄຕລ ສໍານັກງານໃຫຍ່;
- 2001-2002 ເປັນຫົວໜ້າໜ່ວຍງານສິນເຊື່ອ, ພະແນກຄຸ້ມຄອງສິນເຊື່ອ;
- 2002-2004 ເປັນອໍານວຍການຫົວໜ້າ ທຄຕລ ສາຂາຫຼວງນໍ້າທາ;
- 2004-2009 ເປັນຮອງຫົວໜ້າພະແນກຄຸ້ມຄອງສິນເຊື່ອ;
- 2009-2012 ເປັນຜູ້ອໍານວຍການບໍລິສັດເຊົ່າສິນເຊື່ອ ທຄຕລ;
- 2012-2015 ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ;
- 2015-2018 ເປັນຫົວໜ້າ ທຄຕລ ສາຂາໄຊຍະບູລີ;
- 01/2018-06/2023 ເປັນຫົວໜ້າ ທຄຕລ ສາຂາດົງໂດກ;
- 06/2023-ປັດຈຸບັນ ເປັນຫົວໜ້າພະແນກກວດກາພາຍໃນ ທຄຕລ ສໍານັກງານໃຫຍ່.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຊີວະປະຫວັດຫຍໍ້ຂອງພະນັກງານ ທຄຕລ



## I. ສະພາບທົ່ວໄປ:

1. ຊື່ ແລະ ນາມສະກຸນ: **ທ່ານ ນ. ສຸດຖະໜອມ ແກ້ວລະຄອນ**
2. ວັນ, ເດືອນ, ປີເກີດ: 05/03/1979
3. ບ່ອນທີ່ອາໄສຢູ່ປະຈຸບັນ: ບ້ານ: ສີໄຄ, ເມືອງ: ສີໂຄດຕະບອງ, ແຂວງ: ນະຄອນຫຼວງວຽງຈັນ.
4. ຕໍາແໜ່ງ ແລະ ໜ້າທີ່ຮັບຜິດຊອບສາຍລັດ: ຫົວໜ້າພະແນກບັນຊີສັງລວມ.
5. ວັນ, ເດືອນ, ປີ ເຂົ້າສັງກັດລັດ: 07/12/2000 (23 ປີ)
6. ວັນ, ເດືອນ, ປີ ເລື່ອນເປັນພະນັກງານສົມບູນ: 01/10/2001.
7. ວັນ, ເດືອນ, ປີ ເຂົ້າພັກສໍາຮອງ: 06/02/2008.
8. ວັນ, ເດືອນ, ປີ ເຂົ້າພັກສົມບູນ: 01/06/2009.
9. ລະດັບທິດສະດີການເມືອງ: ບໍາລຸງ 45 ວັນ
10. ລະດັບການສຶກສາດ້ານວິຊາການສູງສຸດ: ຊັ້ນປະລິນຍາໂທ, ຈົບປີ: 2018, ສາຂາວິຊາ: ບໍລິຫານທຸລະກິດ ຈົບຈາກ: ມະຫາວິທະຍາໄລຢູນນານ ສປ ຈີນ
11. ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ພາສາຈີນ, ລະດັບ: ດີຫຼາຍ; ພາສາອັງກິດ: ພໍໃຊ້.

## II. ສະພາບການເຄື່ອນໄຫວວຽກງານນັບແຕ່ມື້ເຂົ້າສັງກັດລັດ ຈົນເຖິງປັດຈຸບັນ:

- 2000-2002 ເປັນພະນັກງານ ທຄຕລ ສາຂາຫຼວງນໍ້າທາ;
- 2002-2005 ເປັນຫົວໜ້າຂະແໜງຫ້ອງການ-ບັນຊີ-ໄອທີ;
- 2005-2008 ເປັນວ່າການຮອງຫົວໜ້າ ທຄຕລ ສາຂາຫຼວງນໍ້າທາ;
- 2008-2010 ເປັນວ່າການຫົວໜ້າ ທຄຕລ ສາຂາຫຼວງນໍ້າທາ;
- 2010-2014 ເປັນຫົວໜ້າ ທຄຕລ ສາຂາຫຼວງນໍ້າທາ;
- 2014-2017 ໄປຍົກລະດັບປະລິນຍາໂທຢູ່ ສປຈີນ.
- 2017-2021 ເປັນ ຫົວໜ້າ ທຄຕລ ສາຂາຫຼວງນໍ້າທາ;
- 07/2021-2022 ເປັນຫົວໜ້າພະແນກການຕະຫຼາດ ທຄຕລ ສໍານັກງານໃຫຍ່.
- 07/2022-06/2023 ເປັນຫົວໜ້າພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່ ທຄຕລ ສໍານັກງານໃຫຍ່.
- 06/2023-ປະຈຸບັນ ເປັນຫົວໜ້າພະແນກບັນຊີສັງລວມ.

## III. ການຈັດຕັ້ງຕີລາຄາການເຄື່ອນໄຫວວຽກງານໄລຍະຜ່ານມາ:

ເປັນພະນັກງານລຸ້ນບຸກເບີກ ສາຂາຫຼວງນໍ້າທາ, ເປັນຄົນອຸ່ນອຽນທຸ່ນທ່ຽງ ແລະ ມີຄວາມຊື່ສັດຕໍ່ໜ້າທີ່ວຽກງານ, ມີທັດສະນະຫຼັກໝັ້ນດີ ມີຄວາມສາມາດໃນການບໍລິຫານວຽກງານໄດ້ດີ, ມີຄວາມສາມັກຄີກວ້າງຂວາງ, ຮູ້ພົວພັນຂັ້ນເທິງ ແລະ ປະສານງານກັບຂັ້ນລຸ່ມໄດ້ດີ ສາມາດເຮັດສໍາເລັດໜ້າທີ່ວຽກງານຈັດຕັ້ງມອບໝາຍໃຫ້ໄດ້ເປັນຢ່າງດີ ແລະ ສາມາດສ້າງເປັນພະນັກງານສືບທອດໄດ້.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



# ຊີວະປະຫວັດຫຍໍ້ຂອງພະນັກງານ ທຄຕລ

## I. ສະພາບທົ່ວໄປ:

- ຊື່ ແລະ ນາມສະກຸນ: ທ່ານ ນ. ພູແສງທອງ ອານຸລັກຄໍາ.
- ວັນ, ເດືອນ, ປີ ເກີດ: 28/07/1974.
- ບ່ອນຢູ່ປະຈຸບັນ: ບ້ານ: ໂພນສີມບູນ, ເມືອງ: ສີໂຄດຕະບອງ, ແຂວງ: ນະຄອນຫຼວງວຽງຈັນ.
- ຕໍາແໜ່ງ: ຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ.
- ວັນ, ເດືອນ, ປີ ເຂົ້າສັງກັດລັດ: 13/02/1995, ປີການ: 28 ປີ.
- ລະດັບທິດສະດີການເມືອງ: ຊັ້ນຕົ້ນ.
- ລະດັບການສຶກສາ: ຈົບປະລິນຍາໂທ ສາຂາການບັນຊີການເງິນ ຈາກມະຫາວິທະຍາແຫ່ງຊາດ.
- ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ພາສາອັງກິດ, ລະດັບ: ດີ.

## II. ສະພາບການເຄື່ອນໄຫວວຽກງານນັບແຕ່ມື້ເຂົ້າສັງກັດລັດຈົນເຖິງປັດຈຸບັນ:

- 02/1995 - 09/1996 ວິຊາການພະແນກບັນຊີ
- 09/1996 - 11/1998 ວິຊາການພະແນກເງິນຝາກ
- 11/1998 - 02/2002 ວິຊາການພະແນກກວດກາພາຍໃນ
- 02/2002 - 07/2003 ວິຊາການພະແນກເງິນຝາກ
- 07/2003 - 07/2006 ວິຊາການພະແນກບັນຊີ
- 07/2006 - 2009 ເປັນວ່າການຮອງຫົວໜ້າສູນໄອທີ
- 2009 - 08/2010 ເປັນຮອງຫົວໜ້າສູນໄອທີ
- 09/2010 - 07/2015 ເປັນຮອງຫົວໜ້າສູນບໍລິການອີເລັກໂທນິກ ແລະ ຜະລິດຕະພັນບັດ
- 07/2015 - 08/2018 ເປັນຫົວໜ້າພະແນກກວດກາພາຍໃນ
- 08/2018 - 06/2023 ເປັນຫົວໜ້າພະແນກບັນຊີສັງລວມ
- ປະຈຸບັນ ເປັນຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ.

## III. ການຈັດຕັ້ງຕີລາຄາການເຄື່ອນໄຫວວຽກງານໄລຍະຜ່ານມາ:

ເປັນຄົນອຸ່ນອຽນທຸ່ນທ່ຽງ, ມີຫັດສະນະຫຼັກໝັ້ນດີ, ມີຄວາມສາມັກຄີກວ້າງຂວາງ, ຮູ້ປະສານງານກັບຂັ້ນເທິງຂັ້ນລຸ່ມໄດ້ດີ ສາມາດເຮັດສໍາເລັດໜ້າທີ່ໆການຈັດຕັ້ງມອບໝາຍໃຫ້, ມີຜົນງານໃນການປະກອບສ່ວນວຽກງານຢູ່ ທຄຕລ ເປັນໄລຍະເວລາຫຼາຍປີ ແລະ ມີຄວາມຊໍານານ ທາງດ້ານການບັນຊີທະນາຄານ.